

# ພວງປະສົມປະສານຟາມ

ຂ້າພະເຈົ້າຊື່ ທ້າວ ພວງ ທິພະຈັນ, ອາຍຸ 28 ປີ, ຈົບປະລິນຍາຕີ ສາຂາ ວິທະຍາສາດພືດ ຈາກ ມະຫາວິທະຍາໄລສຸພານຸວົງ. ຍ້ອນວ່າຄອບຄົວເຮັດກະສິກຳມາກ່ອນ, ກ່ອນທີ່ຈະສະໝັກຂໍທຶນ ພໍ່-ແມ່ ກໍ່ປູກຜັກເລັກໆນ້ອຍໆ ພໍໄດ້ຂາຍພາຍໃນບ້ານ ແລະ ຂ້າພະເຈົ້າເອງກໍ່ມັກຮັກກະສິກຳ ພໍເຫັນໂຄງການປະກາດຂ້າພະເຈົ້າຈຶ່ງໄດ້ສະໝັກ.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2019 ທັງໝົດແມ່ນ 10,215,000 ກີບ (ສິບລ້ານສອງແສນສິບຫ້າພັນກີບ).

**ປະເພດທຸລະກິດ:**
ທຸລະກິດທີ່ເຮັດແມ່ນປູກຜັກຕາມລະດູການ, ລ້ຽງໝູ, ລ້ຽງໄກ່ລາດ ແລະ ລ້ຽງເປັດຂາຍ, ຊຶ່ງເປັນການຂະຫຍາຍ ແລະ ປັບປຸງ ທຸລະກິດທີ່ມີກ່ອນໜ້ານີ້ ໃຫ້ເປັນຮູບເປັນຮ່າງຫຼາຍຂຶ້ນ ອາໄສເອົາຄວາມຮູ້ທີ່ໄດ້ມາຈາກການລົງຝຶກງານມາປັບປຸງວິທີການລ້ຽງສັດ ແລະ ປູກຜັກໃຫ້ໄດ້ຮັບຜົນດີຂຶ້ນກວ່າເກົ່າ.

**ການນຳໃຊ້ທຶນ:**
ໃນປີ 2019 ທຶນທີ່ໄດ້ມາຂ້າພະເຈົ້າໄດ້ນຳມາປັບ-ຂະຫຍາຍ ພື້ນທີ່ສວນຜັກ, ປັບປຸງລະບົບນ້ຳ, ຊື້ອາຫານສັດ, ຊື້ແນວພັນຜັກ, ຊື້ແນວພັນໝູ 1 ໂຕ ແລະ ຊື້ແນວພັນໄກ່ 20 ໂຕ.

**ເປົ້າໝາຍ:**
ເປົ້າໝາຍໃນປີ 2020 ແມ່ນຄາດວ່າຈະຜະລິດຜັກຂາຍໃຫ້ໄດ້ 1,800ກິໂລ, ຂາຍໝູນ້ອຍ 16 ໂຕ, ຂາຍໄກ່ຊີ້ນ 150 ໂຕ ແລະ ໄກ່ນ້ອຍ 300 ຄູ່.

**ບັນຫາທີ່ພົບພໍ້:**
ໄກ່ເປັນພະຍາດ, ໝູເປັນອະຫິວາ ແກ້ໄຂບັນຫາໂດຍແຍກໄກ່ທີ່ເປັນພະຍາດ ແລະ ບໍ່ເປັນພະຍາດອອກຈາກກັນ ແລະ ສັກວັກຊີນປ້ອງກັນໃຫ້ຖືກຕ້ອງຕາມລະດູການ. ໃນຊ່ວງຝົນຕົກຜັກເກີດພະຍາດໃບດ່າງ, ໃບໄໝ້ ແລະ ມີບັນຫາແມງໄມ້ ເຂົ້າທຳລາຍຜັກ, ໄດ້ແກ້ໄຂບັນຫາໂດຍໃຊ້ຜ້າປົກຄຸມໜານປູກ, ບີບແມງໄມ້ດ້ວຍມື ແລະ ໃຊ້ສະໝູນໄພສີດພົ່ນ, ປັດຈຸບັນນີ້ແມ່ນເຮັດເຮືອນຮົ່ມສຳລັບປູກຜັກ.

**ລາຍຮັບຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍ:**

- ປີ 2020 ຂາຍຜັກກາດຕົ້ນໝີໄດ້ 240 ກິໂລ, ຂາຍຜັກກວາງຕຸ້ງ 560 ກິໂລ, ຜັກສະຫຼັດ 220 ກິໂລ, ຜັກກາດຂາວ, 150 ກິໂລ , ຫອມບົ່ວ 10 ກິໂລ,ຫອມປ້ອມ 220 ກິໂລ, ຫອມລາບ 85 ກິໂລ , ຫົວສີໄຄ 90 ກິໂລ, ໝາກເຜັດ 48 ກິໂລ, ໝາກເຂືອ 60 ກິໂລ,ໝາກຫຸ່ງ 5 ກິໂລ, ໝາກບວບ 60 ກິໂລ, ໝາກຖົ່ວ 10 ກິໂລ, ໄກ່ນ້ອຍ 40 ໂຕ, ໄກ່ຊີ້ນ 35 ກິໂລ ແລະ ລູກໝູ 6 ໂຕ. ລວມເປັນເງິນທັງໝົດ 16,379,000 ກີບ.
  ປີ 2021 ຂາຍໝູ, ໄກ່ຊີ້ນ, ໄກ່ນ້ອຍ, ຂາຍພືດຜັກຕາມລະດູການ, ລວມລາຍຮັບແມ່ນ 18,000,000 ກີບ.





